ພິທີເປີດໂຕໂຄງການ IMPACT Biz

# ກອງປະຊຸມໂອ້ລົມກ່ຽວກັບວຽກງານການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃນ ສປປລາວ

15 ກັນຍາ 2022

## ບົດຂ່າວ

ການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບແມ່ນເປັນສິ່ງສຳຄັນສຳລັບການຟື້ນຕົວທາງດ້ານ ເສດຖະກິດໃນ ສປປ ລາວ




ບັນດາກະຊວງ, ຫົວໜ່ວຍທຸລະກິດ, ອົງການກຳມະບານ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນການສຶກສາ, ແລະ ບັນດາຄູ່ຮ່ວມພັດທະນາ ຮ່ວມຕົວກັນເພື່ອປະຊຸມໂອ້ລົມກ່ຽວກັບວຽກງານການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃນ ສປປ ລາວ.

**ຮູບພາບໂດຍ:** ສິນສະຫວັນ ສອນປະເສີດ, ອົງການ UNDP ປະຈຳລາວ.

**ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2022 -** ກະຊວງອຸດສາຫະກຳ ແລະ ການຄ້າ (MoIC), ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI), ສະຖານທູດຍີ່ປຸ່ນ, ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ຮ່ວມເປັນເຈົ້າພາບຈັດການສົນທະນາກ່ຽວກັບການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃນ ສປປ ລາວ ເພື່ອເປີດໂຄງການໃໝ່ໃນຫົວຂໍ້ "ການປັບປຸງປະສິດທິພາບ, ຄວາມຮັບຜິດຊອບ, ຫຼັກການປະຕິບັດ, ແລະ ຄວາມໂປ່ງໃສຂອງທຸລະກິດໃນ ສປປ ລາວ", ຫຼື ເປັນທີ່ຮູ້ຈັກໃນຊື່ໂຄງການ IMPACT Biz.

ໃນຊ່ວງທົດສະວັດທີ່ຜ່ານມາ, ສປປ ລາວ ເປັນໜຶ່ງໃນປະເທດທີ່ມີເສດຖະກິດຂະຫຍາຍຕົວໄວທີ່ສຸດໃນອາຊຽນ. ແຕ່ໃນຂະນະທີ່ການເຄື່ອນໄຫວຂອງທຸລະກິດໄດ້ຊຸກຍູ້ຄວາມກ້າວໜ້າ ແລະ ການຂະຫຍາຍຕົວນີ້, ມັນກໍ່ຕ້ອງໄດ້ແລກມາກັບການສູນເສຍຊັບພະຍາກອນທາງດ້ານສິ່ງແວດລ້ອມ ແລະ ນໍາໄປສູ່ຄວາມທ້າທາຍໃນການຮັກສາມາດຕະຖານແຮງງານ. ການເພີ່ມຂຶ້ນຂອງມົນລະພິດທາງນໍ້າ ແລະ ທາງອາກາດ, ການທໍາລາຍຊີວະນາໆພັນ, ແລະ ການລະເມີດສິດທິແຮງງານໂດຍທຸລະກິດທີ່ບໍ່ມີຄວາມຮັບຜິດຊອບ ໄດ້ສົ່ງຜົນກະທົບໃນທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ເຊິ່ງກໍຄືການສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ຊີວິດປະຈໍາວັນຂອງປະຊາຊົນຈໍານວນຫຼາຍ.

ເພື່ອຮັບປະກັນວ່າການດໍາເນີນກິດຈະການທາງດ້ານທຸລະກິດຈະຍັງຄົງຂັບເຄື່ອນການຂະຫຍາຍໂຕທາງດ້ານເສດຖະກິດຂອງ ລປປ ລາວ ໂດຍບໍ່ກະທົບຕໍ່ສິ່ງແວດລ້ອມ ແລະ ຄວາມເປັນຢູ່ທີ່ດີຂອງປະຊາຊົນ, ສປປ ລາວຕ້ອງໄດ້ຍອມຮັບ ແລະ ຮອງຮັບເອົາວາລະທາງທຸລະກິດທີ່ມີຄວາມຮັບຜິດຊອບ.

ໂດຍການປະເມີນຜົນກະທົບຢ່າງຫ້າວຫັນ ແລະ ດໍາເນີນມາດຕະການເພື່ອປ້ອງກັນຜົນກະທົບທາງດ້ານລົບ, ທຸລະກິດທີ່ມີຄວາມຮັບຜິດຊອບສາມາດປັບປຸງການເຂົ້າເຖິງສິນຄ້າ ແລະ ການບໍລິການທີ່ຈໍາເປັນໃນການສ້າງວຽກເຮັດງານທໍາໃຫ້ກຸ່ມຄົນຜູ້ທີ່ດ້ອຍໂອກາດ ແລະ ສ້າງພື້ນຖານພາສີທີ່ຍືນຍົງເພື່ອລົງທຶນໃນໂຄງການລິເລີ່ມທາງສັງຄົມ. ທຸລະກິດທີ່ມີຄວາມຮັບຜິດຊອບຍັງມີການຮ່ວມມືໃນການເຮັດວຽກທີ່ດີຂຶ້ນກັບຊຸມຊົນທີ່ເຂົາເຈົ້າດໍາເນີນການຢູ່ ແລະ ພ້ອມທັງສາມາດສ້າງກໍາໄລທີ່ສູງຂຶ້ນໄດ້ເມື່ອເວລາຜ່ານໄປ.

“ການສະໜັບສະໜູນບັນດາທຸລະກິດລາວໃນການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບເປັນຂັ້ນຕອນທີ່ສໍາຄັນໃນການສ້າງຄວາມໝັ້ນໃຈວ່າບໍລິສັດລາວຍັງຄົງສາມາດແຂ່ງຂັນໄດ້. ຫຼັກຖານຈາກທົ່ວໂລກໄດ້ສະແດງໃຫ້ເຫັນວ່າທຸລະກິດທີ່ໃຊ້ແນວທາງປະຕິບັດທີ່ມີຄວາມຮັບຜິດຊອບແມ່ນມີຂໍ້ໄດ້ປຽບໃນການດຶງດູດບຸກຄະລາກອນທີ່ຫຼາກຫຼາຍຄວາມສາມາດ ແລະ ຂໍ້ໄດ້ປຽບໃນການຮັກສາພະນັກງານ, ຫຼຸດຜ່ອນຄວາມສ່ຽງດ້ານຊື່ສຽງ ແລະ ທາງກົດໝາຍ ສາມາດເຂົ້າເຖິງຖານຕະຫຼາດໃໝ່ໆ ແລະ ພ້ອມທັງເປັນການສ້າງພາບພົດທີ່ດີຕໍ່ບໍລິສັດອີກດ້ວຍ”, ທ່ານ ໄຊບັນດິດ ຣາຊະພົນ, ຮອງປະທານ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໄດ້ແລກປ່ຽນ.

“ບັນດານັກລົງທຶນໃນທົ່ວໂລກກໍາລັງຊອກຫາການສ້າງຜົນກະທົບໃນທາງບວກຕໍ່ສິ່ງແວດລ້ອມໃຫ້ຫຼາຍຂຶ້ນເລື້ອຍໆ ແລະ ຮັບປະກັນວ່າການລົງທຶນແມ່ນຕ້ອງມີຄວາມຮັບຜິດຊອບຕໍ່ສັງຄົມ. ໂດຍອີງໃສ່ທຶນຮອນທີ່ມີການຂະຫຍາຍຕົວໃນແຕ່ລະປີ, ສປປ ລາວ ຈໍາເປັນທີ່ຈະຕ້ອງສ້າງຈຸດຢືນທີ່ແຂງແຮງເພື່ອດຶງດູດການລົງທຶນທີ່ມີປະສິດທິພາບສູງ ແລະ ຍືນຍົງໃນໄລຍະຍາວ ເພື່ອຮັກສາການເຂົ້າເຖິງເສດຖະກິດຂະໜາດໃຫຍ່ຂຶ້ນນີ້ເຫດດ້ວຍ . ທັງລັດຖະບານ ແລະ ພາກເອກະຊົນຈຶ່ງຕ້ອງມີຄວາມກະຕືລືລົ້ນທີ່ຈະຮອງຮັບເອົາວຽກງານການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບເຂົ້າເປັນພາລະບົດບາດຫຼັກ ເພື່ອຊຸກຍູ້ການຟື້ນຕົວທາງດ້ານເສດຖະກິດ,” ພະນະທ່ານ ດຣ ມະໂນທອງ ວົງໄຊ, ຮອງລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ, ໄດ້ເນັ້ນໜັກ.

ຫຼັກການຊີ້ນໍາຂອງອົງການສະຫະປະຊາຊາດ (UNGPs) ວ່າດ້ວຍການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ເປັນກອບຂອງການເຮັດວຽກລະດັບໂລກທີ່ຈະຊີ້ນໍາຄວາມກ້າວໜ້າຂອງ ສປປ ລາວ ໃນການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບ.

“ຫຼັກການຊີ້ນໍາດັ່ງກ່າວ ໄດ້ຮຽກຮ້ອງໃຫ້ທຸກປະເທດສ້າງແຜນປະຕິບັດງານແຫ່ງຊາດວ່າດ້ວຍການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບ. ເສດຖະກິດ ທັງ 30 ແຫ່ງໄດ້ຮັບຮອງເອົາແຜນປະຕິບັດງານແຫ່ງຊາດດັ່ງກ່າວແລ້ວ,

ແລະ ສປປ ລາວ ບໍ່ຄວນຖືກປະຖິ້ມໄວ້ຂ້າງຫຼັງໃນທ່າອ່ຽງຂອງໂລກນີ້," ທ່ານ ນາງ ເຄັດເທີຣິນ ເຟືອງ, ຜູ້ຮັກສາການອີງການ UNDP ໄດ້ກ່າວ" .ເມື່ອບໍ່ດົນມານີ້ ອົງການ UNDP ໄດ້ສະໜັບສະໜູນການພັດທະນາແຜນປະຕິບັດງານແຫ່ງຊາດຢູ່ອິນໂດເນເຊຍ, ມາເລເຊຍ, ໄທ, ແລະ ຫວຽດນາມ, ແລະ ພວກເຮົາຫວັງວ່າຈະໄດ້ສະໜັບສະໜູນລັດຖະບານແຫ່ງ ສປປ ລາວ ໃນຂະບວນການນີ້."

ໂຄງການ IMPACT Biz ໃໝ່ນີ້ ແມ່ນເປັນສ່ວນໜຶ່ງຂອງໂຄງການລະດັບໂລກ ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານຍີ່ປຸ່ນ ໃນ 17 ປະເທດ ແລະ ໂຄງການນີ້ມີຄວາມພະຍາຍາມທີ່ຈະພັດທະນາແນວທາງການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃນ ສປປ ລາວ ໂດຍການຊ່ວຍລັດຖະບານສ້າງກົດໝາຍ ແລະ ນະໂຍບາຍທີ່ເຂັ້ມງວດຍິ່ງຂຶ້ນກວ່າເກົ່າໃນການຄຸ້ມຄອງການດຳເນີນທຸລະກິດ, ແນະນຳທຸລະກິດໃນການດຳເນີນທຸລະກິດຜົນເມີນປະການ .

ລ້ອມແວດແລະ ສິ່ງສັງຄົມ ຕໍ່ກະທົບ, ແລະ ຊ່ວຍພາກປະຊາສັງຄົມໃນການຕິດຕາມການດຳເນີນທຸລະກິດທີ່ບໍ່ມີຄວາມຮັບຜິດຊອບໃນທົ່ວບັນດາອຸດສາຫະກຳ ແລະ ແຂວງຕ່າງໆ.

---

**ສຳຫຼັບຂໍ້ມູນເພີ່ມເຕີມ ຕິດຕໍ່ຫາ:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຫົວໜ້າໜ່ວຍງານການສື່ສານຂອງ UNDP
aksonethip.somvorachit@undp.org

ນາງ ສິນສະຫວັນ ສອນປະເສີດ
ພະນັກງານການສື່ສານ ແລະ ປະຊາສຳພັນສຳຫຼັບການປົກຄອງຂອງ UNDP
sinsavanh.sonepaseuth@undp.org